**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ...3024.../ກປ.

ນະຄອນຫຼວງວຽງຈັນ, ວັນທີ 11 JUN 2024

# ແຈ້ງການ

**ເຖິງ:** - ທ່ານ ຫົວໜ້າຫ້ອງການ, ບັນດາກົມ ແລະ ສະຖາບັນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້;

- ທ່ານຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ນະຄອນຫລວງວຽງຈັນ.

**ເລື່ອງ:** ການສ້າງຂະບວນການ ປົກປັກຮັກສາ ແລະ ພັດທະນາ ປາ ແລະ ສັດນ້ຳ ເນື່ອງໃນວັນ ປ່ອຍປາ ແລະ ສັດນ້ຳແຫ່ງຊາດ 13 ກໍລະກົດ 2024.

- ອີງຕາມ ກົດໝາຍ ວ່າດ້ວຍສັດນ້ຳ ແລະ ການປະມົງ (ສະບັບປັບປຸງ) ສະບັບເລກທີ 91/ສພຊ ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້, ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 2103/ກລປ,ລົງວັນທີ 31 ພຶດສະພາ 2024.

ພັກ ແລະ ລັດຖະບານ ຍາມໃດກໍ່ເຫັນຄວາມສຳຄັນ ແລະ ຖືເອົາການອະນຸລັກ, ປົກປັກຮັກສາ, ພັດທະນາປາ ແລະ ສັດນ້ຳ ເປັນວຽກສຳຄັນ ແລະ ມີຄວາມຈຳເປັນ ສຳລັບຊີວິດການເປັນຢູ່ຂອງປະຊາຊົນລາວ ໂດຍໄດ້ກຳ ນົດເອົາວັນທີ 13 ກໍລະກົດ ເປັນວັນປ່ອຍປາ ແລະ ສັດນ້ຳ ແຫ່ງຊາດ (ມາດຕາ 95 ຂອງກົດໝາຍວ່າດ້ວຍ ສັດນ້ຳ ແລະ ການປະມົງ ສະບັບປັງປຸງ) ຊຶ່ງໃນແຕ່ລະປີ ການຈັດຕັ້ງແຕ່ລະຂັ້ນ ນັບທັງສູນກາງ ແລະ ທ້ອງຖິ່ນ ຕະຫຼອດຮອດພໍ່ແມ່ປະຊາຊົນ ກໍໄດ້ຈັດພິທີປ່ອຍປາລົງສູ່ແຫຼ່ງນ້ຳທຳມະຊາດ ແລະ ເຂດພື້ນທີ່ຂອງຕົນ ຢ່າງເປັນຂະບວນຟົດຟື້ນ ຕິດພັນກັບການຍົກສູງຄວາມຮັບຜິດຊອບຂອງສັງຄົມໃນການເອົາໃຈໃສ່ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ແບບຍືນຍົງ. ສະເພາະປີ 2023 ຜ່ານມາສາມາດປ່ອຍປາໄດ້ທັງໝົດ 62 ລ້ານໂຕ ແລະ ໃນປີ 2024 ຂະແໜງການກະສິກຳ ແລະ ປ່າໄມ້ ພວກເຮົາ ກໍໄດ້ວາງແຜນສູ້ຊົນໃນການປ່ອຍປາ ແລະ ສັດນ້ຳ ໃຫ້ໄດ້ທັງໝົດ 64 ລ້ານ ໂຕ. ເພື່ອບັນລຸຕົວເລກດັ່ງກ່າວ ຕິດພັນກັບການສົ່ງເສີມການລ້ຽງ, ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປາ ແລະ ສັດນ້ຳ ໃຫ້ມີການຂະຫຍາຍຕົວຕາມທິດສີຂຽວ ແລະ ຍືນຍົງ.

**ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ອອກແຈ້ງການ:**

1. ໃຫ້ ກົມລ້ຽງສັດ ແລະ ການປະມົງ ເປັນເຈົ້າການປະສານສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ນະຄອນຫຼວງວຽງຈັນ ເອົາໃຈໃສ່ໂຄສະນາເຜີຍແຜ່ ບັນດານະໂຍບາຍ, ກົດໝາຍ ແລະ ປຸກຈິດສຳນຶກ ໂດຍຜ່ານສື່ມວນຊົນຕ່າງໆ ເປັນຕົ້ນ ໜັງສືພິມ, ໂທລະພາບ, ວິທະຍຸ ແລະ ສື່ອື່ນໆ ໃຫ້ທົ່ວສັງຄົມເຂົ້າຮ່ວມໃນການປ່ອຍປາ ແລະ ສັດນ້ຳ ແປໃສ່ປ່ອຍປາ ແລະ ສັດນ້ຳ ໃຫ້ເປັນຂະບວນກວ້າງຂວາງ ແລະ ບັນລຸຕາມແຜນການທີ່ວາງໄວ້. ພ້ອມນັ້ນ, ກໍ່ໃຫ້ທົ່ວປວງຊົນຮັບຮູ້ ແລະ ເຂົ້າໃຈ ຕໍ່ກັບນະໂຍບາຍຂອງລັດ ແລະ ເຫັນໄດ້ເຖິງຄວາມໝາຍຄວາມສຳຄັນຂອງປາ ແລະ ສັດນ້ຳ ຕໍ່ກັບການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ ທັງ

ເປັນການປຸກລະດົມໃຫ້ທຸກພາກສ່ວນປະກອບສ່ວນເຂົ້າໃນການອະນຸລັກ, ປົກປັກຮັກສາ ແລະ ພັດທະນາ ປາ ແລະ ສັດນໍ້າ ຕາມກົດໝາຍ ແລະ ລະບຽບການກໍານົດ;

2. ໃຫ້ພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ເປັນເຈົ້າການປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ຈັດຕັ້ງພິທີປ່ອຍປາ ແລະ ສັດນໍ້າ ລົງແຫຼ່ງນໍ້າຕ່າງໆ ຕິດພັນກັບການຈັດຕັ້ງການຄຸ້ມຄອງ ແລະ ປົກປັກຮັກສາ ເພື່ອໃຫ້ມີການສືບຕໍ່ຂະຫຍາຍພັນເພີ່ມຂຶ້ນ ແລະ ເພີ່ມຄວາມອຸດົມສົມບູນຂອງປາ ແລະ ສັດນໍ້າ;

3. ໃຫ້ກົມລ້ຽງສັດ ແລະ ການປະມົງ, ກົມສົ່ງເສີມ ແລະ ສະຫະກອນ ແລະ ພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ຊີ້ນໍາ ສູນ, ສະຖານີຜະລິດແນວພັນປາຂອງພາກລັດ ແລະ ເອກະຊົນໃນການກະກຽມ ຜະລິດ ແລະ ສະໜອງລູກປາ ໃນວັນປ່ອຍປາແຫ່ງຊາດໃຫ້ພຽງພໍ ໂດຍເນັ້ນໃສ່ການປ່ອຍປາພັນພື້ນເມືອງ (ປາປາກ, ປາເພ້ຍ, ປາແກງ, ປາຊວາຍ, ປາເຄິງ ແລະ ປາຊະນິດອື່ນໆ) ແລະ ຫ້າມປ່ອຍປາພັນຕ່າງປະເທດ ເຊັ່ນ: ປານິນ, ປາໃນ, ປາດຸກພັນ ປາເກັດແລບ ແລະ ຊະນິດອື່ນໆ ລົງໃສ່ແຫຼ່ງນໍ້າທໍາມະຊາດ ຊຶ່ງເປັນການທໍາລາຍແຫຼ່ງທີ່ຢູ່ອາໄສ ຫຼື ການວາງໄຂ່ຂອງປາພື້ນເມືອງລາວ;

4. ໃຫ້ກົມລ້ຽງສັດ ແລະ ການປະມົງ, ພະແນກກະສິກໍາ ແລະ ປ່າໄມ້ ແຂວງ ແລະ ນະຄອນຫຼວງວຽງຈັນ ຊີ້ນໍາຂະແໜງ ລ້ຽງສັດ ແລະ ການປະມົງ ຊຸກຍູ້ຊາວກະສິກອນ ແລະ ຜູ້ປະກອບການ ສືບຕໍ່ຂະຫຍາຍການລ້ຽງປາ ແລະ ສັດນໍ້າ ທຸກຮູບແບບ ເຊັ່ນ: ການລ້ຽງປາໃນໜອງ, ລ້ຽງປາໃສ່ກະຊັງ, ລ້ຽງປາໃນນາເຂົ້າ, ລ້ຽງປາແບບປະສົມປະສານ ແລະ ຮູບແບບອື່ນໆ ໃຫ້ເປັນຂະບວນ, ພ້ອມທັງເອົາໃຈໃສ່ແນະນໍາທາງດ້ານເຕັກນິກ-ວິຊາການ ດ້ານແນວພັນ, ການໃຫ້ອາຫານ, ບົວລະບັດຮັກສາ, ປ້ອງກັນພະຍາດ ແລະ ເກັບກູ້ຜົນຜະລິດໃຫ້ຖືກຕ້ອງຕາມຫຼັກວິຊາການ ຕິດພັນກັບການເພີ່ມຄວາມເຂັ້ມງວດ ໃນການປະຕິບັດມາດຕະການເກືອດຫ້າມການຫາປາແບບດັບສູນ;

5. ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກໍາໃດໜຶ່ງ ດັ່ງນີ້:
   - ນໍາໃຊ້ທາດເບື່ອ, ລະເບີດ, ອາວຸດ, ເຄື່ອງໄຟຟ້າ, ຄົ້ນ, ເຄື່ອງແສງ, ສຽງ ເພື່ອຫາ ຫຼື ຈັບສັດນໍ້າແບບດັບສູນ;
   - ນໍາໃຊ້ເຄື່ອງມືຫາສັດນໍ້າ ທີ່ມີຄວາມສ່ຽງເຮັດໃຫ້ສັດນໍ້າສູນພັນ ເຊັ່ນ: ອວນ, ລີ, ມອງຕາຖີ່, ໂຕ່ງ, ລອບຂະໜາດໃຫຍ່ ແລະ ອື່ນໆ;
   - ຫາສັດນໍ້າ ຈາກແຫຼ່ງນໍ້າທໍາມະຊາດ ດ້ວຍການ ຕັນຫ້ວຍ, ໂສກ, ບຸ່ງ, ຄອງນໍ້າ, ຂຸດໜອງ ຫຼື ດູດໜອງທໍາມະຊາດທີ່ມີນໍ້າຕະຫຼອດປີ;
   - ຮັບເອົາ, ຊື້ ຂາຍ, ຄອບຄອງ ຫຼື ຂົນສົ່ງ ສັດນໍ້າບັນຊີ I ໂດຍບໍ່ໄດ້ຮັບອະນຸຍາດ;
   - ສ້າງສິ່ງກີດຂວາງທາງເດີນ ຂອງສັດນໍ້າ ໂດຍບໍ່ໄດ້ຮັບອະນຸຍາດ;
   - ລ້ຽງ ແລະ ຫຼື ປ່ອຍສັດນໍ້າ ຕ່າງຖິ່ນທີ່ມີຄວາມສ່ຽງທໍາລາຍສັດນໍ້າພື້ນເມືອງ ແລະ ລະບົບນິເວດ
   - ປຸກຝົດນໍ້າ ທີ່ຈະເປັນການທໍາລາຍ ລະບົບນິເວດ ຫຼື ແຫຼ່ງລ້ຽງສັດ ໂດຍບໍ່ໄດ້ຮັບອະນຸຍາດ;
   - ບຸກລຸກ ວັງສະຫງວນ ຫຼື ເຂດອະນຸລັກພັນສັດນໍ້າ, ເຂດປາອໍ່, ແຫຼ່ງສັດນໍ້າວາງໄຂ່, ເຂດຈະເລີນເຕີບໂຕຂອງລູກສັດນໍ້າໄວອ່ອນ;
   - ຫາສັດນໍ້າ ໃນລະດູວາງໄຂ່;
   - ບໍລິໂພກ, ຊື້-ຂາຍ ສັດນໍ້າ ທີ່ ຕາຍໂດຍບໍ່ຮູ້ສາເຫດ, ເປັນພະຍາດ ຫຼື ປົນເປື້ອນສານເຄມີຕົກຄ້າງ;

- ມີພຶດຕິກຳອື່ນໆ ທີ່ເປັນການລະເມີດກົດໝາຍ;

ກໍລະນີພົບເຫັນຜູ້ລະເມີດຂໍ້ຫ້າມດັ່ງກ່າວ ໃຫ້ສົມທົບກັບພາກສ່ວນກ່ຽວຂ້ອງດຳເນີນມາດຕະການກ່າວເຕືອນ, ສຶກສາອົບຮົມ, ປັບໃໝ ແລະ ດຳເນີນຄະດີ ຢ່າງເຂັ້ມງວດ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ ເລກທີ 91/ສພຊ, ລົງວັນທີ 17 ກໍລະກົດ 2023.

6. ສຳລັບກິດຈະກຳຈັດພິທີປ່ອຍປາ ແລະ ສັດນ້ຳ ແຫ່ງຊາດ 13 ກໍລະກົດ 2024 ນີ້, ໃຫ້ອີງໃສ່ເງື່ອນໄຂຕົວຈິງຂອງແຕ່ລະທ້ອງຖິ່ນ ໂດຍໃຫ້ເນັ້ນໃສ່ເນື້ອໃນປຸກລະດົມເປັນຕົ້ນຕໍ ບົນພື້ນຖານປະຢັດມັດທະຍັດ ແລະ ຕ້ານການຟູມເຟືອຍ, ບ່ອນໃດມີເງື່ອນໄຂກໍ່ໃຫ້ເລີ່ມຈັດຕັ້ງປະຕິບັດແຕ່ດຽວນີ້ເປັນຕົ້ນໄປ ໂດຍບໍ່ໃຫ້ລໍຖ້າຮອດວັນທີ 13 ກໍລະກົດ;
7. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຕິດຄຳຂວັນກ່ຽວກັບ ວັນປ່ອຍປາ ແລະ ສັດນ້ຳ ແຫ່ງຊາດ ຕາມສະຖານທີ່ຕ່າງໆ ເພື່ອເປັນການໂຄສະນາເຜີຍແຜ່, ລະດົມໃຫ້ທົ່ວປວງຊົນເຂົ້າຮ່ວມ ແລະ ເປັນເຈົ້າການປ່ອຍປາ ແລະ ສັດນ້ຳ ໃຫ້ເປັນຂະບວນການຟົດຟື້ນ ເຊິ່ງມີຄຳຂວັນດັ່ງນີ້: (1) "ຊົມເຊີຍ ວັນປ່ອຍປາ ແລະ ສັດນ້ຳ ແຫ່ງຊາດ ວັນທີ 13 ກໍລະກົດ", (2) "ຈົ່ງພ້ອມກັນປ່ອຍປາ ແລະ ສັດນ້ຳ ຄືນສູ່ທຳມະຊາດໃຫ້ມີຄວາມອຸດົມສົມບູນຕະຫຼອດໄປ" ແລະ (3) "ການປົກປັກຮັກສາປາ ແລະ ສັດນ້ຳ ແມ່ນພັນທະຂອງປວງຊົນທັງຊາດ". ສຳຫຼັບປ້າຍແມ່ນໃຫ້ໃສ່ ພື້ນສີຟ້າ ແລະ ໂຕໜັງສືສີຂາວ;
8. ຜ່ານການຈັດຕັ້ງປະຕິບັດຕົວຈິງ ມີຂໍ້ສະດວກ ແລະ ຫຍຸ້ງຍາກແນວໃດ ໃຫ້ລາຍງານການນຳກະຊວງ ການນຳແຂວງ ແລະ ນະຄອນຫຼວງວຽງຈັນ ຮັບຊາບຕາມຂັ້ນຕອນ ເພື່ອພິຈາລະນາແກ້ໄຂຢ່າງທັນການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງໃຫ້ໄດ້ຮັບຜົນດີ.

ລັດຖະມົນຕີ

ກະຊວງກະສິກຳ ແລະ ປ່າໄມ້ ★ ລັດຖະມົນຕີ ★

ຮສ. ປອ ລິນຄຳ ດວງສະຫວັນ

ບ່ອນນຳສົ່ງ:

- ຫ້ອງວ່າການສູນກາງພັກ 01 ສະບັບ (ເພື່ອລາຍງານ)
- ຫ້ອງວ່າການ ສນຍ 01 ສະບັບ (ເພື່ອລາຍງານ)
- ກະຊວງຖະແຫຼງຂ່າວ 01 ສະບັບ (ເພື່ອຊ່ວຍອອກຂ່າວ)
- ກະຊວງ ກຊສ 01 (ເພື່ອຊາບ)
- ຫ້ອງວ່າການປົກຄອງແຂວງ 01 (ເພື່ອຊ່ວຍຊີ້ນຳ)
- ເກັບຮັກສາໄວ້ 01 ສະບັບ